

ໂດຍປະທານທອມມັສ ແອັສ ມອນສັນ

# "ພຣະອົງຊົງຟື້ນ"

## ປະຈັກພະຍານຂອງສາດສະດາ

"ສຽງໂຮ່ຮ້ອງຂອງກຸ່ມຄຣິດສະຕຽນ," ປະທານ ທອມມັສ ແອັສ ມອນສັນ ໄດ້ປະກາດ, ນັ້ນຄື ພຣະເຢຊູແຫ່ງນາຊາເຣັດໄດ້ລຸກຂຶ້ນຈາກຄວາມຕາຍ. "ຄວາມເປັນຈິງຂອງການເປັນຄືນມາສູ່ຊີວິດໄດ້ນໍາຄວາມສະຫງົບມາໃຫ້ທຸກຄົນ ຊຶ່ງເກີນຄວາມເຂົ້າໃຈ" (ເບິ່ງ ຟີລິບປອຍ 4:7).[1]

ໃນບົດຄວາມສັ້ນໆດັ່ງຕໍ່ໄປນີ້, ປະທານມອນສັນໄດ້ແບ່ງປັນປະຈັກພະຍານ ແລະ ຄວາມກະຕັນຍູຂອງເພິ່ນ ເຖິງການເປັນຄືນມາສູ່ຊີວິດຂອງພຣະຜູ້ຊ່ອຍໃຫ້ລອດ ແລະ ປະກາດວ່າເພາະພຣະບຸດໄດ້ເອົາຊະນະຄວາມຕາຍ, ສະນັ້ນລູກໆຂອງພຣະບິດາທຸກຄົນຜູ້ທີ່ໄດ້ມາສູ່ໂລກຈະມີຊີວິດຄືນອີກ.

### ຊີວິດຫລັງຈາກມະຕະ

"ຂ້າພະເຈົ້າເຊື່ອວ່າ ບໍ່ມີຄົນໃດສາມາດເຂົ້າໃຈຢ່າງເລິກຊຶ້ງເຖິງສິ່ງທີ່ພຣະຄຣິດໄດ້ກະທໍາໄປເພື່ອເຮົາ ຢູ່ໃນສວນເຄັດເຊມາເນວ່າສໍາຄັນຫລາຍຂະໜາດໃດ, ແຕ່ຂ້າພະເຈົ້າມີຄວາມກະຕັນຍູຫລາຍໃນຊີວິດຂອງຂ້າພະເຈົ້າຕໍ່ການເສຍສະລະຊີວິດໃຊ້ຂອງພຣະອົງແທນເຮົາ.

"ໃນຊ່ວງເວລາສຸດທ້າຍ, ພຣະອົງສາມາດຫັນໜີໄປໄດ້. ແຕ່ພຣະອົງບໍ່ໄດ້ເຮັດ. ພຣະອົງໄດ້ຜ່ານຜ່າທຸກສິ່ງ ເພື່ອວ່າພຣະອົງຈະໄດ້ຊ່ອຍທຸກຄົນໃຫ້ລອດ. ໃນການເຮັດເຊັ່ນນັ້ນ, ພະອົງໄດ້ຊ່ອຍໃຫ້ເຮົາມີຊີວິດຫລັງຈາກຊ່ວງມະຕະນີ້. ພຣະອົງໄດ້ໄຖ່ຖອນເອົາເຮົາຈາກການຕົກຂອງອາດາມ.

"ຂ້າພະເຈົ້າຂໍສະແດງຄວາມກະຕັນຍູຕໍ່ພຣະອົງຢ່າງເລິກຊຶ້ງ. ພຣະອົງໄດ້ສອນເຮົາໃຫ້ຮູ້ວິທີທີ່ຈະມີຊີວິດ. ພຣະອົງໄດ້ສອນເຮົາໃຫ້ຮູ້ວິທີທີ່ຈະຕາຍ. ພຣະອົງໄດ້ນໍາຄວາມລອດມາໃຫ້ເຮົາ.[2]

### ການກໍາຈັດຄວາມມືດແຫ່ງຄວາມຕາຍ

"ໃນບາງກໍລະນີ, ດັ່ງເຊັ່ນຄວາມທຸກທໍລະມານ ແລະ ຄວາມປ່ວຍໄຂ, ຄວາມຕາຍຈະມາເຖິງ ຄືກັບວ່າເປັນ ທູດແຫ່ງຄວາມເມດຕາ. ແຕ່ສ່ວນຫລາຍ, ເຮົາຄິດວ່າມັນເປັນສັດຕູແຫ່ງຄວາມສຸກຂອງມະນຸດ.

"ຄວາມມືດແຫ່ງຄວາມຕາຍສາມາດຖືກກໍາຈັດໄປໂດຍຄວາມສະຫວ່າງແຫ່ງຄວາມຈິງທີ່ໄດ້ເປີດເຜີຍ. 'ເຮົານີ້ແຫລະເປັນເຫດໃຫ້ຄົນທັງປວງເປັນຄືນມາ ທັງເປັນຊີວິດ,' ພຣະອາຈານໄດ້ກ່າວ. 'ຜູ້ທີ່ວາງໃຈເຊື່ອໃນເຮົາເຖິງແມ່ນວ່າຕາຍໄປແລ້ວກໍຍັງມີຊີວິດຢູ່: ຜູ້ໃດທີ່ຍັງມີຊີວິດຢູ່ ແລະ ເຊື່ອເຮົາຈະບໍ່ຕາຍຈັກເທື່ອ.'

"ການເປັນຄືນມາສູ່ຊີວິດນີ້—ແມ່ນແລ້ວ, ເປັນການຢືນຢັນທີ່ສັກສິດ—ເຖິງຊີວິດທີ່ເກີນກວ່າຫລຸມຝັງສົບ ສາມາດໃຫ້ຄວາມສະຫງົບທີ່ໄດ້ສັນຍາໄວ້ໂດຍພຣະຜູ້ຊ່ອຍໃຫ້ລອດ ເມື່ອພຣະອົງໄດ້ໃຫ້ຄວາມແນ່ນອນໃຈ ແກ່ສານຸສິດຂອງພຣະອົງວ່າ: 'ເຮົາມອບສັນຕິສຸກໄວ້ກັບພວກເຈົ້າ, ເປັນສັນຕິສຸກຂອງເຮົາທີ່ເຮົາມອບໃຫ້ພວກເຈົ້າ: ສັນຕິສຸກທີ່ເຮົາໃຫ້ບໍ່ຄືສັນຕິສຸກທີ່ໂລກໃຫ້. ຢ່າວຸ້ນວາຍເປັນທຸກໃຈ ແລະ ຢ່າສູ່ຢ້ານ.'"[3]

## ພຣະອົງບໍ່ໄດ້ຢູ່ບ່ອນນີ້

"ພະຜູ້ຊ່ອຍໃຫ້ລອດຂອງເຮົາມີຊີວິດຄືນອີກ. ເຫດການທີ່ຮຸ່ງໂລດ, ປອບໂຍນ ແລະ ໃຫ້ຄວາມແນ່ນອນໃຈ ໃນປະຫວັດສາດຂອງມະນຸດໄດ້ເກີດຂຶ້ນ—ການເອົາຊະນະຄວາມຕາຍ. ຄວາມເຈັບປວດ ແລະ ຄວາມທຸກທໍລະມານທີ່ສວນເຄັດເຊມາເນ ແລະ ທີ່ຄາວາລີ ໄດ້ຖືກລຶບລ້າງໄປ. ຄວາມລອດຂອງມວນ ມະນຸດກາຍເປັນສິ່ງແນ່ນອນ. ການຕົກຂອງອາດາມໄດ້ຖືກຖອນຄືນ.

"ອຸບ ໂມງທີ່ວ່າງເປົ່າໃນເຊົ້າຂອງວັນອີດສະເຕີເທື່ອທຳອິດນັ້ນໄດ້ເປັນຄຳຕອບໃຫ້ແກ່ໂຢບທີ່ຖາມວ່າ, 'ຖ້າຄົນຕາຍແລ້ວ, ເຂົາຈະຄືນມີຊີວິດອີກບໍ?' ຕໍ່ທຸກຄົນທີ່ໄດ້ຍິນຂ້າພະເຈົ້າ, ຂ້າພະເຈົ້າປະກາດວ່າ, ຖ້າຄົນຕາຍແລ້ວ, ເຂົາຈະຄືນມີຊີວິດອີກ. ເຮົາຮູ້, ເພາະເຮົາມີຄວາມສະຫວ່າງແຫ່ງການເປີດເຜີຍເຖິງຄວາມຈິງ. …

"ອ້າຍເອື້ອຍນ້ອງທີ່ຮັກແພງ, ໃນຊ່ວງເວລາທີ່ໂສກເສົ້າທີ່ສຸດຂອງເຮົາ, ເຮົາສາມາດໄດ້ຮັບຄວາມສະຫງົບສຸກ ທີ່ເລິກຊຶ້ງໄດ້ຈາກຖ້ອຍຄຳຂອງທູດອົງທີ່ກ່າວໃນເຊົ້າຂອງວັນອີດສະເຕີ ທີ່ວ່າ, ພະອົງບໍ່ຢູ່ທີ່ນີ້; 'ພະອົງເປັນຄືນ ມາສູ່ຊີວິດແລ້ວ.'"[4]

## ທຸກຄົນຈະມີຊີວິດອີກ

"ເຮົາຫິວ, ເຮົາຮ້ອງໄຫ້, ເຮົາເຮັດວຽກງານ, ເຮົາຫລິ້ນ, ເຮົາຮັກ, ເຮົາດຳເນີນຊີວິດ. ແລະ ຈາກນັ້ນເຮົາຕາຍ. …

"ແລະ ເຮົາຄົງຕາຍຢູ່ຈັ່ງຊັ້ນ ຖ້າຫາກບໍ່ເປັນເພາະພຣະອົງດຽວນັ້ນ ແລະ ພາລະກິດຂອງພຣະອົງ, ແມ່ນແຕ່ພຣະເຢຊູແຫ່ງນາຊາເຣັດ. …

"ດ້ວຍສຸດໃຈ ແລະ ສຸດຈິດວິນຍານອັນແຮງກ້າຂອງຂ້າພະເຈົ້າ, ຂ້າພະເຈົ້າຂໍເປັ່ງສຽງຂອງຂ້າພະເຈົ້າໃນການເປັນພະຍານໃນຖານະທີ່ເປັນພະຍານພິເສດ ແລະ ຂໍປະກາດວ່າພຣະເຈົ້າຊົງພຣະຊົນຢູ່. ພຣະເຢຊູຄືພຣະບຸດຂອງພຣະອົງ, ເປັນພຣະບຸດອົງດຽວທີ່ຖືກຳເນີດຂອງພຣະບິດາໃນເນື້ອໜັງ. ພຣະອົງເປັນພຣະຜູ້ໄຖ່ຂອງເຮົາ; ພຣະອົງເປັນຜູ້ກ່າວແທນເຮົານຳພຣະບິດາ. ພຣະອົງໄດ້ເປັນຜູ້ທີ່ໄດ້ຢູ່ເທິງໄມ້ກາງແຂນເພື່ອຊົດໃຊ້ແທນບາບຂອງເຮົາ. ພຣະອົງໄດ້ກາຍເປັນໝາກຜົນທຳອິດຂອງການເປັນຄືນມາສູ່ຊີວິດ. ເພາະພຣະອົງໄດ້ສິ້ນພຣະຊົນ, ເຮົາທຸກຄົນຈຶ່ງຈະມີຊີວິດອີກ."[5]

## ປະຈັກພະຍານສ່ວນຕົວ

"ຂ້າພະເຈົ້າຂໍເປັນພະຍານວ່າ ຄວາມຕາຍໄດ້ປະລາໄຊໄປແລ້ວ, ໄດ້ເອົາຊະນະອຸບ ໂມງແລ້ວ. ຂໍໃຫ້ຖ້ອຍຄຳເຫລົ່ານັ້ນທີ່ໄດ້ເຮັດໃຫ້ສັກສິດໂດຍພຣະອົງຜູ້ຊຶ່ງໄດ້ບັນລຸມັນ ກາຍເປັນຄວາມຮູ້ແກ່ທຸກຄົນດ້ວຍເທີ້ນ. ຈົ່ງຈື່ຈຳຖ້ອຍຄຳເຫລົ່ານັ້ນ. ຈົ່ງທະນຸຖະໜອມມັນ. ຈົ່ງໃຫ້ກຽດມັນ. *ພຣະອົງຊົງພຣະຊົນ.*"[6]


ແຫລ່ງອ້າງອີງ

1. "He Is Risen," *Liahona,* Apr. 2003, 7.
2. "At Parting," *Liahona,* May 2011, 114.
3. "Now Is the Time," *Liahona,* Jan. 2002, 68; ເບິ່ງ ໂຢຮັນ 11:25–26; 14:27 ນຳອີກ.
4. "He Is Risen," *Liahona,* May 2010, 89, 90; ເບິ່ງ ໂຢບ 14:14; ມັດທາຍ 28:6 ນຳອີກ.
5. "I Know That My Redeemer Lives!" *Liahona,* May 2007, 24, 25.
6. *Liahona,* Apr. 2003, 7.


## ການສອນຈາກຂ່າວສານນີ້

ຫລັງຈາກໄດ້ແບ່ງປັນບົດຄວາມຈາກຂ່າວສານຂອງປະທານມອນສັນແລ້ວ, ໃຫ້ສັງເກດເບິ່ງວ່າ ເພິ່ນໄດ້ເປັນພະຍານເຖິງຄວາມໝາຍທີ່ແທ້ຈິງຂອງບຸນອີດສະເຕີ. ທ່ານສາມາດຖາມສະມາຊິກໃນຄອບຄົວຄຳຖາມດັ່ງຕໍ່ໄປນີ້: "ມັນໝາຍຄວາມວ່າແນວໃດຕໍ່ທ່ານທີ່ວ່າສາດສະດາທີ່ມີຊີວິດຢູ່ໄດ້ເປັນພະຍານເຖິງຄວາມຈິງ ດັ່ງກ່າວໃນປະຈຸບັນນີ້? ທ່ານຈະນຳໃຊ້ມັນຢູ່ໃນຊີວິດຂອງທ່ານແນວໃດ?" ທ່ານຄວນຕື່ມປະຈັກພະຍານຂອງທ່ານໃສ່ນຳ.

## ຄົນໜຸ່ມ

### ຂ້າພະເຈົ້າຈະເຫັນພຣະອົງອີກ

**ໂດຍ ມໍແກນ ວິແບັກ**

ພໍ່ໄດ້ເຮັດໃຫ້ພວກເຮົາແຕ່ລະຄົນຜູ້ເປັນລູກຮູ້ສຶກເປັນຄົນພິເສດ. ເພິ່ນຮັກພວກເຮົາ ແລະ ໃຫ້ອະໄພງ່າຍ. ເພິ່ນເຮັດໄດ້ດີຫລາຍທີ່ສຸດເພື່ອໃຫ້ແນ່ໃຈວ່າພວກເຮົາແຕ່ລະຄົນມີຄວາມສຸກ, ແລະ ເພິ່ນໄດ້ເຮັດໃຫ້ແຈ່ມແຈ້ງວ່າ ເພິ່ນຫວັງສິ່ງທີ່ດີທີ່ສຸດສຳລັບພວກເຮົາ. ຂ້າພະເຈົ້າຮັກເພິ່ນຫລາຍແທ້ໆ.

ຕອນຂ້າພະເຈົ້າຢູ່ຊັ້ນປີຫ້າ, ພໍ່ຂອງຂ້າພະເຈົ້າໄດ້ເສຍຊີວິດໄປໃນອຸປະຕິເຫດລົດຊົນ. ຄອບຄົວຂອງຂ້າພະເຈົ້າກັບຂ້າພະເຈົ້າມີຄວາມທຸກໂສກຫລາຍ. ເບິ່ງຄືວ່າມັນເປັນປ່ອງໃຫຍ່ຢູ່ໃນຄອບຄົວພວກເຮົາ. ພໍ່ເປັນຄົນທີ່ຂ້າພະເຈົ້າເພິ່ງພາອາໄສ, ເປັນຄົນທີ່ຂ້າພະເຈົ້າໄປຫາຖ້າຫາກຂ້າພະເຈົ້າມີບັນຫາ. ແທນທີ່ຈະຊອກຫາຄວາມຊ່ອຍເຫລືອ, ຂ້າພະເຈົ້າໄດ້ເກັບຄວາມຄຽດແຄ້ນ ແລະ ຄວາມເຈັບປວດໄວ້. ໃນທີ່ສຸດຂ້າພະເຈົ້າຕົກລົງວ່າ ມັນເປັນຄວາມຜິດຂອງພຣະເຈົ້າ. ຂ້າພະເຈົ້າໄດ້ເຊົາອ່ານພຣະຄຳພີ ແລະ ເຊົາອະທິຖານ. ຂ້າພະເຈົ້າພຽງໄປໂບດ ເພາະແມ່ຂອງຂ້າພະເຈົ້າຢາກໃຫ້ຂ້າພະເຈົ້າໄປ. ຂ້າພະເຈົ້າພະຍາຍາມຢູ່ຫ່າງໄກຈາກພຣະບິດາເທິງສະຫວັນ.

ແລ້ວຂ້າພະເຈົ້າໄດ້ໄປນອນຄ້າຍກັບກຸ່ມຍິງໜຸ່ມເປັນເທື່ອທຳອິດ. ຂ້າພະເຈົ້າມັກພົບໝູ່ເພື່ອນໃໝ່, ແຕ່ຂ້າພະເຈົ້າບໍ່ໄດ້ອ່ານພຣະຄຳພີຂອງຂ້າພະເຈົ້າ. ໃນຄືນສຸດທ້າຍ, ພວກເຮົາໄດ້ມີກອງປະຊຸມກ່າວປະຈັກພະຍານ. ຂ້າພະເຈົ້າໄດ້ຮູ້ສຶກບາງສິ່ງທີ່ຂ້າພະເຈົ້າບໍ່ເຄີຍຮູ້ສຶກມາເປັນເວລາດົນນານ: ພຣະວິນຍານ. ຂ້າພະເຈົ້ານັບຖືຍິງໜຸ່ມຜູ້ທີ່ຂຶ້ນກ່າວປະຈັກພະຍານຂອງເຂົາເຈົ້າ, ແຕ່ຂ້າພະເຈົ້າໄດ້ນັ່ງຢູ່ເພາະຂ້າພະເຈົ້າຄິດວ່າ ຂ້າພະເຈົ້າບໍ່ມີປະຈັກພະຍານ. ແລ້ວໃນທັນທີທັນໃດນັ້ນ ຂ້າພະເຈົ້າຮູ້ສຶກວ່າ ຂ້າພະເຈົ້າຕ້ອງໄດ້ຂຶ້ນໄປ. ຂ້າພະເຈົ້າໄດ້ເປີດປາກ, ບໍ່ຮູ້ຈັກວ່າຈະເວົ້າຫຍັງ. ສະນັ້ນຂ້າພະເຈົ້າຈຶ່ງໄດ້ກ່າວວ່າ ຂ້າພະເຈົ້າດີໃຈນຳຄ້າຍສຳລັບກຸ່ມຍິງໜຸ່ມ. ແລ້ວຂ້າພະເຈົ້າພົບເຫັນຕົນເອງກ່າວວ່າ ຂ້າພະເຈົ້າຮູ້ວ່າພຣະເຢຊູໄດ້ສິ້ນພຣະຊົນເພື່ອຂ້າພະເຈົ້າ ແລະວ່າພຣະບິດາເທິງສະຫວັນຂອງຂ້າພະເຈົ້າຮັກຂ້າພະເຈົ້າ ແລະວ່າສາດສະໜາຈັກນີ້ແທ້ຈິງ.

ຂ້າພະເຈົ້າໄດ້ເຕັມໄປດ້ວຍຄວາມສະຫງົບອັນໜ້າແປກປະຫລາດ. ເພາະປະສົບການນັ້ນ ຂ້າພະເຈົ້າຈຶ່ງສາມາດກ່າວອອກມາໄດ້ວ່າ ຂ້າພະເຈົ້າຮູ້ວ່າຂ້າພະເຈົ້າຈະໄດ້ເຫັນພໍ່ຂອງຂ້າພະເຈົ້າອີກ ເພາະການຊົດໃຊ້ ແລະ ການເປັນຄືນມາສູ່ຊີວິດຂອງພຣະຜູ້ຊ່ອຍໃຫ້ລອດ.

© 2012 ໂດຍ Intellectual Reserve, Inc. ສະຫງວນລິຂະສິດທຸກປະການ. ຈັດພິມໃນສະຫະລັດອາເມຣິກາ. ສະບັບເປັນພາສາອັງກິດໄດ້ຮັບອະນຸຍາດ: 6/11. ການແປໄດ້ຮັບອະນຸຍາດ: 6/11. ແປຈາກ *First Presidency Message, April 2012.* Laotian. 10364 331

# ຮັກ, ດູແລ, ແລະ ເພີ່ມຄວາມເຂັ້ມແຂງ

*ໃຫ້ສຶກສາຂ່າວສານນີ້, ແລະ ເມື່ອເໝາະສົມ ໃຫ້ສົນທະນາກ່ຽວກັບມັນນຳເອື້ອຍນ້ອງທີ່ທ່ານໄປຢ້ຽມຢາມ. ໃຫ້ໃຊ້ຄຳຖາມຕ່າງໆເພື່ອຊ່ອຍທ່ານເພີ່ມຄວາມເຂັ້ມແຂງໃຫ້ແກ່ເອື້ອຍນ້ອງ ແລະ ເຮັດໃຫ້ສະມາຄົມສະຕີສົງເຄາະເປັນກິດຈະກຳໜຶ່ງໃນຊີວິດຂອງທ່ານ.*

ສັດທາ • ຄອບຄົວ • ສົງເຄາະ

ເຊັ່ນດຽວກັນກັບພຣະຜູ້ຊ່ອຍໃຫ້ລອດ, ຜູ້ຢ້ຽມສອນໄດ້ປະຕິບັດຕໍ່ແຕ່ລະຄົນ (ເບິ່ງ 3 ນີໄຟ 11:15). ເຮົາຮູ້ວ່າ ເຮົາບັນລຸຄວາມສຳເລັດຜົນຂອງເຮົາໃນການປະຕິບັດໃນຖານະທີ່ເປັນຜູ້ຢ້ຽມສອນເມື່ອເອື້ອຍນ້ອງຂອງເຮົາກ່າວວ່າ: (1) ຄູຢ້ຽມສອນຂອງຂ້ອຍໄດ້ຊ່ອຍເຫລືອຂ້ອຍໃຫ້ເຕີບໂຕທາງວິນຍານ; (2) ຂ້ອຍຮູ້ວ່າຄູຢ້ຽມສອນຂອງຂ້ອຍມີຄວາມເປັນຫ່ວງເປັນໄຍແທ້ໆນຳຂ້ອຍ ແລະ ຄອບຄົວຂອງຂ້ອຍ; ແລະ (3) ຖ້າຂ້ອຍມີບັນຫາ, ຂ້ອຍຮູ້ວ່າຄູຢ້ຽມສອນຂອງຂ້ອຍຈະຊ່ອຍເຫລືອໂດຍທີ່ບໍ່ຕ້ອງໄດ້ຖືກຂໍຮ້ອງກ່ອນ.[1]

ໃນຖານະທີ່ເປັນຜູ້ຢ້ຽມສອນ ເຮົາຈະຮັກ, ດູແລ, ແລະ ເພີ່ມຄວາມເຂັ້ມແຂງໃຫ້ແກ່ເອື້ອຍນ້ອງຂອງເຮົາໄດ້ແນວໃດ? ຕໍ່ໄປນີ້ແມ່ນຄຳແນະນຳເກົ້າຂໍ້ຢູ່ໃນບົດທີ 7 ຂອງປຶ້ມ *Daughters in My Kingdom: The History and Work of Relief Society* ເພື່ອຊ່ອຍເຫລືອຜູ້ຢ້ຽມສອນໃຫ້ປະຕິບັດຕໍ່ເອື້ອຍນ້ອງຂອງຕົນ:

- ອະທິຖານເພື່ອນາງ ແລະ ຄອບຄົວຂອງນາງທຸກວັນ.
- ສະແຫວງຫາການດົນໃຈເພື່ອຈະໄດ້ຮູ້ຈັກນາງ ແລະ ຄອບຄົວຂອງນາງ.
- ໄປຢ້ຽມຢາມນາງເປັນປະຈຳ ເພື່ອຈະໄດ້ຮູ້ວ່ານາງເປັນຢູ່ຈັ່ງໃດ ແລະ ໃຫ້ກຳລັງ ແລະ ເພີ່ມຄວາມ ເຂັ້ມແຂງໃຫ້ນາງ.
- ຕິດຕໍ່ຫາສະເໝີໂດຍການໄປຢ້ຽມຢາມ, ໂທໄປຫາ, ຈົດໝາຍ, ອີ-ເມວ, ແທັກສ໌ເມເຊດສ໌, ແລະ ການເຮັດສິ່ງເລັກນ້ອຍດ້ວຍຄວາມເມດຕາ.
- ທັກທາຍນາງຢູ່ໂບດ.
- ຊ່ອຍເຫລືອນາງຕອນນາງເກີດສຸກເສີນ, ເຈັບປ່ວຍ, ຫລື ໃນເລື່ອງດ່ວນອື່ນໆ.
- ສອນພຣະກິດຕິຄຸນໃຫ້ນາງຈາກພຣະຄຳພີ ແລະ ຈາກຂ່າວສານການຢ້ຽມສອນ.
- ດົນໃຈນາງໂດຍການເປັນຕົວຢ່າງທີ່ດີ.
- ລາຍງານຜູ້ນຳຂອງສະມາຄົມສະຕີສົງເຄາະກ່ຽວກັບການຮັບໃຊ້ຂອງເຂົາເຈົ້າ ແລະ ຄວາມສຸກທຸກທາງວິນຍານ ແລະ ທາງໂລກຂອງເອື້ອຍນ້ອງ

## *ຈາກປະຫວັດສາດຂອງເຮົາ*

"ຄູຢ້ຽມສອນໄດ້ກາຍເປັນຍານພາຫະນະສຳລັບສະຕີໄພ່ພົນຍຸກສຸດທ້າຍຕະຫລອດທົ່ວໂລກທີ່ຈະຮັກ, ບຳລຸງລ້ຽງ, ແລະ ຮັບໃຊ້—ທີ່ຈະ 'ປະຕິບັດຕາມຄວາມເຫັນອົກເຫັນໃຈທີ່ພຣະເຈົ້າໄດ້ປູກຝັງມັນໄວ້ຢູ່ໃນຊວງອົກ [ຂອງເຮົາ],' ດັ່ງທີ່ໂຈເຊັບ ສະມິດ ໄດ້ສອນ."[2]

ເອື້ອຍນ້ອງຄົນໜຶ່ງຜູ້ກາຍເປັນແມ່ໝ້າຍບໍ່ດົນມານີ້ໄດ້ກ່າວເຖິງຜູ້ມາຢ້ຽມສອນຂອງນາງວ່າ: "ເຂົາເຈົ້າຟັງ. ເຂົາເຈົ້າໄດ້ປອບໂຍນຂ້າພະເຈົ້າ. ເຂົາເຈົ້າໄດ້ຮ້ອງໄຫ້ນຳຂ້າພະເຈົ້າ. ແລະ ເຂົາເຈົ້າໄດ້ໂອບກອດຂ້າພະເຈົ້າ. … [ເຂົາເຈົ້າ] ໄດ້ຊ່ອຍເຫລືອຂ້າພະເຈົ້າໃຫ້ເອົາຊະນະຄວາມສິ້ນຫວັງ ແລະ ຄວາມໂສກເສົ້າໃນຊ່ວງໄລຍະສອງສາມເດືອນທີ່ເປົ່າປ່ຽວດຽວດາຍນັ້ນ."[3]

ການໃຫ້ຄວາມຊ່ອຍເຫລືອກັບວຽກງານຊົ່ວຄາວກໍເປັນການປະຕິບັດຄືກັນ. ໃນກອງປະຊຸມໃຫຍ່ເດືອນຕຸລາ ປີ 1856, ປະທານບຣິກຳ ຢັງ ໄດ້ປະກາດວ່າ ຂະບວນລໍ້ຂອງກຸ່ມບຸກເບີກໄດ້ຄ້າງຢູ່ໃນຫິມະປະມານ 270–370 ໄມ (435–595 ກິໂລແມັດ). ເພິ່ນໄດ້ຂໍໃຫ້ໄພ່ພົນຍຸກສຸດທ້າຍຢູ່ໃນເມືອງເຊົາເລັກໄປຊ່ອຍກູ້ຊີວິດເຂົາເຈົ້າ ແລະ ໃຫ້ "ເອົາໃຈໃສ່ຕໍ່ສິ່ງທີ່ພວກເຮົາເອີ້ນວ່າ ເລື່ອງທາງໂລກ."[4]

ລູຊີ ເມເຊີ ສະມິດ ໄດ້ບັນທຶກໄວ້ວ່າພວກຜູ້ຍິງໄດ້ຖອດກະໂປງຊັ້ນໃນ ແລະ ຖົງເທົ້າຂອງຕົນອອກທັນທີຢູ່ໃນຕຶກແທເບີແນໂກນັ້ນ ແລະ ໄດ້ເອົາມັນຂຶ້ນໃສ່ກວຽນເພື່ອສົ່ງໄປໃຫ້ກຸ່ມບຸກເບີກທີ່ໜາວກະດ້າງ. ແລ້ວພວກເຂົາໄດ້ໄປທ້ອນເອົາເຄື່ອງບ່ອນນອນ ແລະ ເຄື່ອງນຸ່ງຫົ່ມສຳລັບຜູ້ທີ່ຈະມາເຖິງພ້ອມກັບສິ່ງຂອງພຽງເລັກນ້ອຍ. ເມື່ອຂະບວນລໍ້ມາເຖິງ, ຕຶກຫລັງໜຶ່ງຢູ່ໃນຕົວເມືອງ ແມ່ນເຕັມໄປດ້ວຍສິ່ງຂອງຕ່າງໆສຳລັບເຂົາເຈົ້າ."[5]

ແຫລ່ງອ້າງອີງ


1. See Julie B. Beck, "What I Hope My Granddaughters (and Grandsons) Will Understand about Relief Society," *Liahona,* Nov. 2011, 113.
2. *Daughters in My Kingdom: The History and Work of Relief Society* (2011), 112.
3. *Daughters in My Kingdom,* 119–20.
4. Brigham Young, "Remarks," *Deseret News,* Oct. 15, 1856, 252.
5. See *Daughters in My Kingdom,* 36–37.


## *ຈາກພຣະຄຳພີ*

ລູກາ 10:38–39; 3 ນີໄຟ 11:23–26; 27:21

*ເຮົາສາມາດເຮັດຫຍັງແດ່?*

1. *ເຮົາຈະສາມາດຮູ້ຈັກວ່າເອື້ອຍນ້ອງຂອງເຮົາຕ້ອງການຫຍັງໄດ້ແນວໃດ?*

2. *ເອື້ອຍນ້ອງຂອງເຮົາຈະຮູ້ໄດ້ແນວໃດວ່າເຮົາເປັນຫ່ວງເປັນໄຍນຳເຂົາເຈົ້າແທ້ໆ?*

ສຳລັບລາຍລະອຽດເພີ່ມເຕີມ, ໃຫ້ເປີດເບິ່ງທີ່ www.reliefsociety.lds.org.

© 2012 ໂດຍ Intellectual Reserve, Inc. ສະຫງວນລິຂະສິດທຸກປະການ. ຈັດພິມໃນສະຫະລັດອາເມຣິກາ. ສະບັບເປັນພາສາອັງກິດໄດ້ຮັບອະນຸຍາດ: 6/11. ການແປໄດ້ຮັບອະນຸຍາດ: 6/11. ແປຈາກ *Visiting Teaching Message, April 2012.* Laotian. 10364 331